ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງເລົ່າງາມ

ຫ້ອງການ ໂຍທາທິການ ແລະ ຂົນສົ່ງ

ເລກທີ.....46..../ຍທຂ.ລງ.

ທີ່ ເລົ່າງາມ, ລົງວັນທີ..30...04...2026.

# ໜັງສືແຈ້ງການ

**ເຖິງ:** ບັນດາບໍລິສັດຕ່າງໆ ທີ່ຢູ່ພາຍໃນ ແລະ ຕ່າງແຂວງ ທີ່ນັບຖື.

**ເລື່ອງ:** ແຈ້ງການເຂົ້າຮ່ວມການປະມູນໂຄງການ ສົມທົບທຶນປະຊາຊົນກໍ່ສ້າງທາງປູຫີນຂົບ ເສັ້ນທາງແຕ່ແຍກທາງເລກ20 ໂຮງໝໍເມືອງ ເລົ່າງາມ - ບ້ານພໍ່ຫຼົງ.

- **ອີງຕາມ:** ກົດໝາຍວ່າດ້ວຍ:ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ30/ສພຊ, ລົງວັນທີ2ພະຈິກ 2017.
- **ອີງຕາມ:** ແຈ້ງການສະບັບເລກທີ 11/ກງຂ.ສວ, ລົງວັນທີ 19/2/2026 ວ່າດ້ວຍການອະນຸມັດແຜນການລົງທຶນຂອງລັດປີ 2026.
- **ອີງຕາມ:** ຂໍ້ຕົກລົງສະບັບເລກທີ 139/ຄປມ, ລົງວັນທີ 29 ເມສາ 2026 ວ່າດ້ວຍການອະນຸມັດໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງເປີດການຈັດຊື້ - ຈັດຈ້າງຂາຍຊອງປະມູນ.

ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງເລົ່າງາມ ໃນນາມເຈົ້າຂອງໂຄງການ ຂໍແຈ້ງເຊີນບໍລິສັດກໍ່ສ້າງ ແລະ ສ້ອມແປງຂົວ-ທາງ ທີ່ຢູ່ພາຍໃນ ແລະ ຕ່າງແຂວງ ມີຄວາມສົນໃຈຢາກເຂົ້າຮ່ວມການປະມູນໂຄງການ 01 ໂຄງການ ຄື:

1.ໂຄງການ ສົມທົບທຶນປະຊາຊົນກໍ່ສ້າງທາງປູຫີນຂົບ ເສັ້ນທາງແຕ່ແຍກທາງເລກ20 ໂຮງໝໍເມືອງ ເລົ່າງາມ - ບ້ານພໍ່ຫຼົງລວງຍາວ 4.5 ກມ, ກວ້າງ 6 ມ.

ບໍລິສັດ ທີ່ຈະເຂົ້າຮ່ວມການປະມູນຕ້ອງມີຄຸນນະສົມບັດ ທີ່ມີຄວາມເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດປະຈຳປີຂອງຂະແໜງການທີ່ກ່ຽວຂ້ອງ ທີ່ກ່ຽວພັນກັບວຽກທີ່ຈະດຳເນີນການກໍ່ສ້າງ ປະເພດຊັ້ນ I ທີ່ຖືກຕ້ອງ, ການເປີດຂາຍຊອງປະມູນແມ່ນເລີ່ມຕົ້ນແຕ່ວັນທີ 30 ເມສາ 2026 ຫາ ວັນທີ 14 ມິຖຸນາ 2026, ລົງຢ້ຽມຢາມພາກສະໜາມຕົວຈິງ ກ່ອນການເປີດຊອງປະມູນແມ່ນວັນທີ 10 ພຶດສະພາ 2026, ຊອງປະມູນຈະເປີດຂຶ້ນ ທີ່ຫ້ອງການ ການເງິນ ເມືອງເລົ່າງາມ ເວລາ 8 ໂມງ 00 ນາທີ ຂອງວັນທີ 14 ມິຖຸນາ 2026, ບໍລິສັດທີ່ຍື່ນຊອງປະມູນ ຕ້ອງໄດ້ປະກອບມີເງິນຄໍ້າປະກັນການປະມູນ ໃນມູນຄ່າບໍ່ໃຫ້ຫລຸດ 2 ເປີເຊັນ ຂອງລາຄາປະມູນເປັນໃບຢັ້ງຢືນຄໍ້າປະກັນຈາກທະນາຄານທີ່ຖືກຕ້ອງຕາມແບບຟອມລະບຸໄວ້ຢູ່ໃນເອກະສານປະມູນ.

ເອກະສານປະມູນຊື້ໄດ້ທີ່ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງເລົ່າງາມ, ຕັ້ງຢູ່ບ້ານໂນນຄຳ, ເມືອງເລົ່າງາມ, ແຂວງສາລະວັນ ເບີໂທລະສັບ 034 3000 064.

ດັ່ງນັ້ນ; ຈຶ່ງອອກແຈ້ງການສະບັບນີ້ ມາຍັງທ່ານຜູ້ທີ່ມີຄວາມສົນໃຈ ເຂົ້າຮ່ວມປະມູນໂຄງການດັ່ງກ່າວຕາມແຈ້ງການສະບັບນີ້ດ້ວຍ.

( ແຈ້ງການເຊີນ ມາດ້ວຍຄວາມນັບຖື ແລະ ຮັກແພງ )

**ເຈົ້າຂອງໂຄງການ**

**ຫົວໜ້າຫ້ອງການ ໂຍທາທິການ ແລະ ຂົນສົ່ງ.**

ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ ເລົ່າງາມ

ນ. ເຂັມພອນ ທາ.ບອນເຕີ